**AEC**
**Australian Electoral Commission**

*Your vote is a valuable thing*




# ຄໍາແນະນໍາ ກ່ຽວກັບ ການຈົດທະບຽນ ແລະ ການປ່ອນບັດ ລົງຄະແນນສຽງ ໃນ ການເລືອກຕັ້ງຣັຖບານກາງ

## ເປັນຫຽັງ ຂ້ອຍ ຕ້ອງ ລົງທະບຽນ ຂ້ອຍ ຈື່ງ ສາມາດ ປ່ອນບັດລົງຄະແນນສຽງໄດ້?

ສິດທິການປ່ອນບັດລົງຄະແນນສຽງ ແມ່ນ ສິດທິພິເສດ ໃນ ຣະບອບປະຊາທິປະໄຕ - ທ່ານ ມີສິດ ເລືອກເອົາ ຕົວແທນ ເຂົ້າໄປ ບໍຣິຫານ ປະເທດ.

ໃນ ປະເທດອົສຕຣາລີ, ການຈົດທະບຽນ ແລະ ການລົງຄະແນນສຽງ ແມ່ນ ຂໍ້ບັງຄັບ ໂດຍ ທາງ ກົດຫມາຍ. ແລະ ສໍາຄັນຫລາຍກວ່ານັ້ນ, ມັນ ແມ່ນໂອກາດຂອງທ່ານໃນການເລືອກເອົາ ຜູ້ແທນ ໄປຕາງໜ້າ ທ່ານໃນ ສະພາແຫ່ງຣັຖບານກາງ.

ໃນເວລາ ທີ່ ທ່ານຈົດທະບຽນ, ຊື່ ແລະ ທີ່ຢູ່ ຂອງ ທ່ານ ໄດ້ຖືກບັນທຶກລົງ ໃນ ບັນຊີການລົງຄະແນນສຽງເລືອກຕັ້ງ, ບັນຊີ ລາຍຊື່ຜູ້ມີສິດລົງຄະແນນສຽງເລືອກຕັ້ງ. ທ່ານ ຕ້ອງ ຈົດທະບຽນ ແລະ ປ່ອນບັດ ລົງ ຄະແນນສຽງເລືອກຕັ້ງ ຖ້າຫາກ ທ່ານ ແມ່ນ ຄົນອົສຕຣາລຽນ ແລະ ມີອາຍຸ 18 ປີ ຂຶ້ນໄປ.

ທ່ານ ສາມາດ ຈົດທະບຽນໄດ້ ຖ້າຫາກ ທ່ານ ມີອາຍຸ 17 ປີ. ໃນລັກສະນະນີ້, ທ່ານຈະມີຊື່ ໃນ ທະບຽນເລືອກຕັ້ງ ແລະ ສາມາດ ລົງຄະແນນສຽງ ໄດ້ ໃນເມື່ອ ທ່ານ ມີ ອາຍຸ 18 ປີ.

ການຈົດທະບຽນ ປິດລົງ ທັນທີ ຫລັງຈາກ ການປະກາດ ວາຣະການເລືອກຕັ້ງ ແລະ ຖ້າຫາກ ທ່ານ ບໍ່ມີ ຊື່ ໃນ ທະບຽນເລືອກຕັ້ງ, ທ່ານ ກໍ່ ບໍ່ສາມາດ ປ່ອນບັດ ລົງຄະແນນສຽງ.
ວັນປິດການຈົດທະບຽນ ສໍາລັບ ການເລືອກຕັ້ງຣັຖບານກາງ, ຣັຖບານແຫ່ງຣັດ ແລະ ຣັຖບານທ້ອງຖິ່ນ ນັ້ນ ແຕກຕ່າງກັນ. ສະນັ້ນ ທ່ານ ຄວນ ຈົດທະບຽນ, ແລະ ສືບຕໍ່ ມີຊື່ ໃນ ທະບຽນ, ເພື່ອໃຫ້ແນ່ໃຈວ່າ ທ່ານ ຈະ ບໍ່ພາດ ໂອກາດ ຈາກ ການລົງ ຄະແນນສຽງເລືອກຕັ້ງ.

## ຂ້ອຍ ຈະ ຈົດທະບຽນ ໄດ້ ວິທີໃດ?

ພຽງແຕ່ ທ່ານ ຂຽນຕື່ມໃສ່ ໃບຄໍາຮ້ອງຈົດທະບຽນ, ໃຫ້ ຂໍ້ມູນ ຢັ້ງຢືນຕົນ (ເລກໃບ ຂັບຂີ່ຍານຍົນ ຖ້າຫາກ ມີ) ແລ້ວ ທ່ານ ກໍ່ ຈະມີ ຊື່ ໃນ ທະບຽນເລືອກຕັ້ງ. ຖ້າຫາກ ທ່ານ ບໍ່ມີ ໃບຂັບຂີ່ຍານຍົນ, ໃຫ້ ເບິ່ງ ໃນໃບຄໍາຮ້ອງ ເພື່ອ ຂໍ້ມູນ ອັນອື່ນໆ.

ຄໍາຮ້ອງໃບດຽວນີ້ ຈະ ຂຶ້ນທະບຽນທ່ານ ເພື່ອ ການລົງຄະແນນສຽງ ຂັ້ນ ຣັຖບານກາງ, ຣັຖບານແຫ່ງຣັດ ແລະ ເກືອບ ທັງຫມົດ ການເລືອກຕັ້ງ ໃນ ຂັ້ນຣັຖບານທ້ອງຖິ່ນ.

ໃນບໍ່ເທົ່າໃດອາທິດນີ້, ທ່ານ ຈະໄດ້ຮັບ ຈົດຫມາຍຢັ້ງຢືນ ການ ຈົດທະບຽ ຂອງ ທ່ານ.

## ຂ້ອຍ ຈະ ເອົາ ໃບຄໍາຮ້ອງຈົດທະບຽນ ໄດ້ ຈາກ ໃສ?

- ພິມເອົາໄດ້ຈາກ - www.aec.gov.au
- ຈາກຫ້ອງການ Australia Post
- ຈາກທຸກໆຫ້ອງການ Australian Electoral Commission (AEC)
- ຈາກຫ້ອງການເກັບພາສີ
- ຈາກຫ້ອງການ Centrelink
- ຈາກຫ້ອງການ Medicare
- ຈາກສູນປະສານການເລືອກຕັ້ງ ໃນ ເຂດ ຊົນນະບົດ ບາງເຂດ

## ຂ້ອຍ ຈະ ສືບຕໍ່ ມີ ຊື່ ໃນ ທະບຽນເລືອກຕັ້ງ ໄດ້ ແນວໃດ?

ໃນທຸກເທື່ອ ທີ່ ທ່ານ ປ່ຽນ ທີ່ຢູ່ - ປ່ຽນຈາກ ກຸ່ມບ້ານນຶ່ງ ໄປຢູ່ອີກ ກຸ່ມບ້ານນຶ່ງ ຫລື ປ່ຽນຈາກ ປະເທດ ນຶ່ງ ໄປຢູ່ ອີກ ປະເທດນຶ່ງ - ຫລື ປ່ຽນຊື່, ທ່ານ ຈໍາຕ້ອງໄດ້ ຂຽນ ໃບຄໍາຮ້ອງ ໃຫມ່.

ການກະທໍາເຊັ່ນນີ້ ແມ່ນ ການຂຶ້ນທະບຽນ ຕາມ ທີ່ຢູ່ໃຫມ່ ຫລື ຕາມ ຊື່ໃຫມ່ ຂອງ ທ່ານ ແລະ ລົບລາຍ ລະອຽດ ອັນເກົ່າ ຂອງ ທ່ານ ອອກຈາກ ທະບຽນເລືອກຕັ້ງ.

ຖ້າຫາກ ທ່ານ ບໍ່ ປັບປ່ຽນ ລາຍລະອຽດ ຂອງ ທ່ານ ໃຫ້ ຖືກກັບ ຄວາມເປັນຈິງອັນປະຈຸບັນ, ຊື່ ຂອງ ທ່ານ ອາດຖືກລຶບອອກ ຈາກ ບັນທຶກເລືອກຕັ້ງ ຊຶ່ງ ຫມາຍຄວາມວ່າ ທ່ານ ໄດ້ສູນເສັຽ ໂອກາດ ລົງຄະແນນສຽງເລືອກຕັ້ງ.

ຖ້າຫາກ ທ່ານ ຍັງບໍ່ທັນ ໄດ້ຮັບ ຈົດຫມາຍຢັ້ງຢືນການຈົດທະບຽນ ຂອງ ທ່ານຈາກ AEC, ທ່ານ ສາມາດ ສອບຖາມໄດ້ ຈາກ AEC ເວບໄສ ຫລື ໂທຣະສັບ **13 23 26**.

## ຂ້ອຍ ຄວນ ເຮັດຫຽັງ ຖ້າຫາກ ຂ້ອຍ ກໍາລັງ ເດີນທາງ ໄປ ຕ່າງປະເທດ?

ການຈົດທະບຽນ ຫລື ການລົງຄະແນນສຽງເລືອກຕັ້ງ ບໍ່ ເປັນການບັງຄັບ ຖ້າຫາກ ທ່ານ ຢູ່ ຕ່າງປະ ເທດ. ຖ້າຫາກ ທ່ານ ເດີນທາງ ໄປ ຕ່າງປະເທດ ເພື່ອ ພັກຜ່ອນ ໃນ ຣະດູພັກການ ຫລື ເປັນ ເວລາດົນກວ່ານັ້ນ, ທ່ານ ຄວນແຈ້ງໃຫ້ ຫ້ອງການ AEC ຊາບ. ຖ້າຫາກ ທ່ານ ບໍ່ແຈ້ງ, ທ່ານ ກໍ່ສ່ຽງຕໍ່ ການຖືກລຶບຊື່ ອອກຈາກ ທະບຽນເລືອກຕັ້ງ.

LAO






## ຂ້ອຍ ຄວນ ເຮັດຫຍັງ ຖ້າຫາກ ຂ້ອຍ ຕ້ອງການ ຮັກສາ ທີ່ຢູ່ ຂອງ ຂ້ອຍ ໄວ້ ເປັນ ການສ່ວນຕົວ?

ທ່ານ ສາມາດ ຂໍ ຈົດທະບຽນ ໃນນາມ ຜູ້ປ່ອນບັດເລືອກຕັ້ງບໍ່ເປີດເຜີຍ ຖ້າຫາກ ທ່ານ ຢັ້ງນວ່າ ການ ເປີດເຜີຍ ທີ່ຢູ່ ຈະ ເປັນໄພອັນຕະລາຍ ຕໍ່ ທ່ານ ແລະ ຕໍ່ ຄອບຄົວ ຂອງ ທ່ານ.

ໃບຄໍາຮ້ອງ ແລະ ຂໍ້ມູນເພີ້ມຕື່ມ ສາມາດ ເອົາໄດ້ຈາກ AEC ເວບໄຊ ຫລື ໂທຣະສັບ **13 23 26**.

## ຂ້ອຍ ຈະ ປ່ອນບັດເລືອກຕັ້ງ ໄດ້ ເວລາໃດ ແລະ ຢູ່ໃສ?

ມື້ເລືອກຕັ້ງຣັຖບານກາງ ແມ່ນ ມີ ເປັນປະຈໍາ ໃນ ວັນເສົາ. ການເລືອກຕັ້ງເລີ້ມແຕ່ 8 ໂມງເຊົ້າ ເຖິງ 6 ໂມງແລງ ທີ່ ສະຖານທີ່ປ່ອນບັດ ທົ່ວປະເທດ. ສະຖານທີ່ ທີ່ທ່ານ ຈະ ຢູ່ ໃນ ມື້ເລືອກຕັ້ງ ຈະ ແມ່ນ ປັດໃຈ ບົ່ງ ຊີ້ ກ່ຽວກັບ ການປ່ອນບັດລົງຄະແນນສຽງເລືອກຕັ້ງ ຂອງ ທ່ານ.

**ຖ້າຫາກ ທ່ານ ຢູ່ ໃນ ເຂດທ້ອງຖິ່ນ ຂອງ ທ່ານ** ທ່ານ ສາມາດ ລົງຄະແນນສຽງ ໄດ້ ຕາມ ທຸກໆ ສູນ ປ່ອນບັດເລືອກຕັ້ງ ໃນ ເຂດເລືອກຕັ້ງ ຂອງ ທ່ານ. ທີ່ຢູ່ ຂອງ ສະຖານທີ່ປ່ອນບັດ ມີ ຢູ່ໃນ AEC ເວບໄຊ ແລະ ໃນ ໜ້າໜັງສືພິມ ຫລາຍໆ ສະບັບໃນ ວັນສຸກ ກ່ອນ ວັນເລືອກຕັ້ງ.

**ຖ້າຫາກ ທ່ານ ຢູ່ໃນ ຣັດ ຂອງ ທ່ານ** ແຕ່ ຢູ່ນອກເຂດ ເລືອກຕັ້ງ ຂອງ ທ່ານ, ທ່ານ ສາມາດ ລົງຄະ ແນນ ສຽງ ໄດ້ ຕາມ ທຸກໆ ສູນເລືອກຕັ້ງ. ການປ່ອນບັດເລືອກຕັ້ງ ແບບນີ້ ຮ້ອງວ່າ ການລົງຄະແນນສຽງ ແບບບໍ່ໄປຮ່ວມ.

**ຖ້າຫາກ ທ່ານ ຢູ່ ໃນ ຣັດ ອື່ນ** ທ່ານ ພຽງແຕ່ສາມາດ ປ່ອນບັດ ໄດ້ ສະເພາະ ຕາມ ສູນເລືອກ ຕັ້ງພິເສດ ຣະຫວ່າງ ຣັດ ເທົ່ານັ້ນ. ທີ່ຢູ່ ຂອງ ສູນປ່ອນບັດ ເຫລົ່ານີ້ ຈະ ປະກາດ ໃຫ້ຮູ້ ໃນ ສະເພາະ ເວລາ ການເລືອກຕັ້ງ. ຫລື, ທ່ານ ສາມາດ ລົງຄະແນນສຽງ ລ່ວງໜ້າ ກ່ອນ ການເດີນທາງ ຫລື ທ່ານ ສາມາດ ລົງຄະແນນ ສຽງ ໂດຍ ທາງ ໄປ ສະນີ.

ຖ້າຫາກ ທ່ານ ບໍ່ສາມາດ ລົງຄະແນນສຽງໄດ້ ໃນ ມື້ເວືອກຕັ້ງ ທ່ານ ອາດ ໄດ້ ສິດລົງຄະແນນສຽງ ກ່ອນ ວັນເລືອກຕັ້ງ ຫລື ຂໍ ລົງຄະແນນສຽງ ທາງ ໄປສະນີ. ທ່ານ ຄວນ ຈື່ ໄວ້ວ່າ, ຖ້າຫາກ ທ່ານ ຂໍລົງ ຄະແນນສຽງ ທາງ ໄປສະນີ, ບັດລົງຄະແນນສຽງເລືອກຕັ້ງ ບໍ່ອາດ ຖືກສົ່ງໃຫ້ ທ່ານ ໄດ້ ຈົນກວ່າພາຍ ຫລັງ ການສິ້ນສຸດ ຂອງ ການປະກາດ ການລົງສະມັກ ຂອງ ຜູ້ສະມັກລົງແຂ່ງຂັນ.

ໃຫ້ເບິ່ງໃນ AEC ເວບໄຊ ເພື່ອ ຂໍ້ມູນເພີ້ມຕື່ມ ກ່ຽວກັບ ທາງເລືອກຕ່າງໆ ເຫລົ່ານີ້.

## ວິທີປ່ອນບັດ

ສໍາລັບ ການເລືອກຕັ້ງຣັຖບານກາງ ຕາມ ປົກກະຕິທ່ານ ຈະ ໄດ້ຮັບ ບັດລົງຄະແນນສຽງ ສອງບັດ ແຕກຕ່າງ ກັນ. ບັດສີຂຽວ ສໍາລັບ ການເລືອກຕັ້ງສະພາຣັຖບານ ແລະ ບັດສີຂາວ ສໍາລັບ ການ ເລືອກຕັ້ງວຸທິສະພາ.

**ໃນບັດສີຂຽວ** ທ່ານ ຕ້ອງ ຂຽນ ເລກໃສ່ ທຸກໆ ກ່ອງ ຕາມ ລໍາດັບ ທີ່ ທ່ານ ມັກ.

**ໃນບັດສີຂາວ** ທ່ານ ສາມາດ ເລືອກ ນຶ່ງໃນສອງແບບ ຂອງ ການລົງຄະແນນສຽງ, ທ່ານ ຂຽນ ເລກ '1' ໃສ່ ໃນ ກ່ອງ ທີ່ ຂ້າງເທິງເສັ້ນສີດໍາເພື່ອ ລົງ ຄະແນນສຽງ ໃຫ້ ພັກ ຫລື ກຸ່ມການ ເມືອງ ຕາມ ຄວາມມັກ ຂອງ ທ່ານ, ຫລື ທ່ານ ສາມາດ ຂຽນ ຕື່ມໃສ່ ໃນ ທຸກໆ ກ່ອງຂ້າງລຸ່ມ ເສັ້ນ ສີດໍາ ຕາມລໍາດັບ ຂອງ ຄວາມມັກ ຂອງ ທ່ານ.

ທ່ານ ສາມາດ ຮຽນຮູ້ ເພີ້ມຕື່ມ ກ່ຽວກັບ ການເລືອກຕັ້ງ, ວິທີການນັບບັດເລືອກຕັ້ງ ແລະ ວິທີການ ປະຕິບັດການເລືອກຕັ້ງ ໄດ້ ໃນ AEC ເວບໄຊ. (ວິທີການປ່ອນບັດສໍາ ຮອງກໍ່ ມີໄວ້ ສໍາລັບ ທ່ານ ເຊັ່ນ ກັນ!)

ຖ້າຫາກ ທ່ານ ຂຽນ ບັດເລືອກຕັ້ງ ບໍ່ຖືກຕ້ອງ ຄະແນນສຽງ ຂອງ ທ່ານ ກໍ່ຈະ ບໍ່ຖືກ ນັບ.

## ຂ້ອຍ ປ່ອນບັດລົງຄະແນນສຽງ ໃຫ້ ໃຜ?

ທ່ານ ລົງຄະແນນສຽງ ໃຫ້ ບຸກຄົນ ທີ່ ຈະໄປ ເປັນ ຜູ້ແທນທ່ານ ໃນ ສະພາຣັຖບານກາງ ທີ່ ແຄນເບີ ຣາ.

ສະພາ ແມ່ນ ໃຈກາງ ຂອງ ຣັຖບານ, ແມ່ນ ບ່ອນອອກມະຕິ ແລະ ຜ່ານກົດໝາຍ ທີ່ ກ່ຽວຂ້ອງກັບ ພວກເຮົາທຸກຄົນ.

ໃນ ການເລືອກຕັ້ງຣັຖບານກາງ ທ່ານ ເລືອກເອົາ ຜູ້ແທນ ສໍາລັບ ສອງສະພາ ປະກອບ ດ້ວຍ ສະພາຣັຖບານກາງ ແລະ ວຸທິສະພາ.

ສໍາລັບ ສະພາຣັຖບານກາງ, ໃນ ປະເທດອົສຕຣາລີ ໄດ້ ແບ່ງອອກ ເປັນ 150 ເຂດເລືອກຕັ້ງ. ທ່ານ ເລືອກເອົາ ນຶ່ງຄົນ ເປັນ ຕົວແທນເຂດ ຂອງ ທ່ານ.

ສໍາລັບ ວຸທິສະພາ, ແຕ່ລະ ຣັດ ມີ 12 ວຸທິສະມາຊິກ ແລະ ແຕ່ລະ ອານາເຂດ (NT ແລະ ACT) ມີ ວຸທິສະພາ ສອງ ທ່ານ. ທ່ານ ເລືອກ ວຸທິສະມາຊິກ ເປັນ ຜູ້ແທນທ່ານ ທົ່ວທັງຣັດ ຫລື ທົ່ວທັງ ອານາເຂດ.

## ບໍຣິການແປພາສາ

ຜູ້ໃຊ້ບໍຣິການແປພາສາ ທີ່ ພິການທາງຫູ/ປາກເວົ້າ ສາມາດ ຕິດຕໍ່ ຜ່ານ ບໍຣິການ National Relay Service. ຜູ້ໃຊ້ບໍຣິການ ທີທີວາຍ ສາມາດ ໂທຣະສັບ **133 677** ແລ້ວຖາມ ຕໍ່ ສາຍ **13 23 26**. Speak and Listen (ບໍຣິການການປາກເວົ້າ-ສູ່-ການ ປາກເວົ້າ) ຜູ້ໃຊ້ບໍຣິການ ສາມາດ ໂທຣະສັບ **1300 555 727** ແລ້ວຖາມຕໍ່ ສາຍ **13 23 26**.

ຜູ້ໃຊ້ບໍຣິການ ທາງ ອິນເຕີແນດ ສາມາດຕິດຕໍ່ກັບ NRS ແລ້ວຖາມຕໍ່ສາຍ **13 23 26**.

ສໍາລັບ ການຊ່ວຍເຫລືອ ໃນ ພາສາ ທີ່ ທ່ານເລືອກ ໃຫ້ ໂທຣະສັບ ຕາມ ເລກ ທີ່ຂ້າງລຸ່ມ.

ພາສາ **ລາວ** **1300 720 153**

ຫ້ອງການ Australian Electoral Commission (AEC) ປະຕິບັດການ ເລືອກຕັ້ງຣັຖບານກາງ ແລະ ການລົງປະຊາມະຕິ, ຮັກສາ ທະບຽນເລືອກຕັ້ງ ແລະ ໃຫ້ ຂໍ້ມູນ ຫລາຍໆດ້ານ ກ່ຽວກັບ ການເລືອກຕັ້ງ ແລະ ໂຄງການການສຶກສາ.

Authorised by Gail Urbanski, West Block Offices, Queen Victoria Terrace, Parkes ACT 2600.

AEC 0111_04.09